# ຄູ່ມື "ການວາງຜັງບ້ານພັດທະນາ, ບ້ານໃຫ່ຍ ແລະ ຕົວເມືອງນ້ອຍໃນຊົນນະບົດ"

*ສະເໜີໂດຍ: ສະຖາບັນໂຍທາ ແລະ ຂົນສົ່ງ*

1

## ຫົວຂໍ້ທີ່ຈະສະເໜີ

I. ຄວາມເປັນມາຂອງປື້ມຄູ່ມື

II. ຂອບເຂດການນຳໃຊ້ປື້ມຄູ່ມື

III. ສ່ວນປະກອບຂອງແຜນຜັງ

IV. ພາກສ່ວນທີ່ກ່ຽວຂ້ອງການວາງແຜນຜັງ

V. ມາດຕະຖານຂອງຕົວເມືອງນ້ອຍໃນຊົນນະບົດ

VI. ໜ້າວຽກແລະຂັ້ນຕອນໃນຄູ່ມືການວາງຜັງບ້ານພັດທະນາ, ບ້ານໃຫ່ຍ ແລະ ຕົວເມືອງນ້ອຍໃນຊົນນະບົດ.

VII. ບາງຕົວຢ່າງການປະເມີນລາຄາເບື້ອງຕົ້ນ

## I. ຄວາມເປັນມາຂອງຄູ່ມື

| | |
|---|---|
| ປີ 2009 | ເລີ້ມເກັບກຳຂໍ້ມູນ ໄດ້ຮັບການມອບໝາຍ ໃຫ້ສະຖາບັນໂຍທາ ແລະ ຂົນສົ່ງ ຮ່ວມກັບກົມເຄຫາ ແລະ ຜັງເມືອງ ຈັດຕັ້ງປະຕິບັດໃນການຄົ້ນຄວ້າ |
| ປີ 2010 | ສຳເລັດ ສະບັບຮ່າງ ໄດ້ແຈກຢາຍໃຫ້ທຸກເມືອງໃນທົ່ວປະເທດ ເພື່ອນຳໄປຄົ້ນຄວ້າ, ທົດລອງນຳໃຊ້ ແລະ ປະກອບຄຳເຫັນ. |
| ປີ 2012 | - ໄດ້ຈັດກອງປະຊຸມປຶກສາລືຢູ່ 5 ແຂວງ ພາກໃຕ້ (ແຂວງ ສາລະວັນ) ຫລັງຈາກນັ້ນ ໄດ້ລົງເກັບກຳຂໍ້ມູນເພີ່ມເຕີມຢູ່ 2 ແຂວງ: *ສະຫວັນນະເຂດ ແລະ ບໍລິຄຳໄຊ.* |
| ປີ 2013 | - ຜ່ານກອງປະຊຸມຄະນະນຳກະຊວງ, ກອງປະຊຸມປຶກສາຫາລືເທື່ອສຸດທ້າຍນຳສະພາວິທະຍາສາດ ແລະ ເທັກໂນໂລຊີ, ກົມເຄຫາແລະຜັງເມືອງ, ມະຫາວິທະຍາໄລແຫ່ງຊາດທັງໝົດ 3 ຄັ້ງ ເພື່ອປັບປຸງເພີ້ມເຕີມ |
| ປີ 2014 | • **ໄດ້ຮັບການເຫັນດີ ຈາກຫົວໜ້າ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ**<br>• **ໄດ້ໃບຮັບຮອງປຶ້ມຄູ່ມືຈາກ ລັດຖະມົນຕີວ່າການ ກະຊວງ ຍທຂ** |

3

## II. ຂອບເຂດການນຳໃຊ້ຄູ່ມື

- ຄູ່ມືນີ້ນຳໃຊ້ສະເພາະຕົວເມືອງທີ່ຂຶ້ນກັບເມືອງ (ເປັນຈຸດສຸມທາງດ້ານເສດຖະກິດ-ສັງຄົມ, ວັດທະນະທຳຍຸດທະສາດ, ປ້ອງກັນຄວາມສະຫງົບ ......)




4

## III. ສ່ວນປະກອບຂອງແຜນຜັງ

**ບົດລາຍງານ**

- ພາກສະເໜີ
- ສະພາບລວມທົ່ວໄປຂອງບ້ານ
- ການວິເຄາະຂໍ້ມູນ
- ທິດທາງໃນການວາງແຜນຜັງ
- ການຄິດໄລ່ທາງດ້ານເຕັກນິກພື້ນຖານໂຄງລ່າງ
- ແນະນຳການຈັດຕັ້ງປະຕິບັດ
- ເອກະສານຊ້ອນທ້າຍ

**ຊຸດຂອງແຜນຜັງ**

- ແຜນຜັງສະພາບປັດຈຸບັນ
- ແຜນຜັງການວິເຄາະ
- ແຜນຜັງສະເໜີໃໝ່

**ບົດແນະນຳ ການຈັດຕັ້ງປະຕິບັດ**

- ການຈັດຕັ້ງປະຕິບັດ
- ການຄຸ້ມຄອງ
- ການປະເມີນຜົນ



## IV. ພາກສ່ວນຫລັກທີ່ກ່ຽວຂ້ອງໃນການວາງແຜນຜັງ

| ອົງການລິເລີ້ມ ຂະບວນການ | ອົງການຂື້ນແຜນ ງົບປະມານ | ອົງການວາງແຜນຜັງ ເມືອງລວມ | ອົງການອະນຸມັດ ແລະ ຮັບຮອງ |
|---|---|---|---|
| ຫ້ອງການ ຍທຂ ເມືອງ | ຫ້ອງການ ຍທຂ ເມືອງ | ພະແນກ ຍທຂ ແຂວງ/ເມືອງ, ສະຖາບັນໂຍທາ ແລະ ຂົນສົ່ງ, ບໍລິສັດເອກະຊົນ (ຖ້າຈຳເປັນ) ທີ່ມີສິດໃນ ການອອກແບບວາງແຜນຜັງ | ເຈົ້າເມືອງ |

V. ມາດຕະຖານຂອງຕົວເມືອງນ້ອຍໃນຊົນນະບົດ

1. ມີເສັ້ນທາງຄົມມະນາຄົມເຂົ້າເຖິງບ້ານທຸງວໄດ້ຕະຫລອດປີ ຢ່າງສະດວກເຊື່ອມຈອດເຖິງເມືອງ ແລະ ບ້ານອື່ນໆອ້ອມຂ້າງ
2. ມີລະບົບໄຟ້າ ແລະ ນ້ຳສະອາດນຳໃຊ້ໃນຕົວເມືອງ
3. ມີພື້ນຖານການຜະລິດ ແລະ ປຸງແຕ່ງເປັນສິນຄ້າທີ່ໝັ້ນຄົງ
4. ມີຕະຫລາດຖາວອນທີ່ມີການຊື້-ຂາຍເປັນປະຈຳ
5. ສູນບລິການໄປສະນີ ຫລື ໂທລະຄົມມະນາຄົມ
6. ສະໂມສອນ ຫຼື ສູນວັດທະນະທຳຂອງບ້ານ
7. ສຸກສາລາ ຫຼື ໂຮງໝໍນ້ອຍ
8. ໜ່ວຍ ຫລື ສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້
9. ຫ້ອງສະໝຸດ ແລະ ຫ້ອງອ່ານໜັງສື
10. ໂຮງຮຽນປະຖົມສົມບູນ
11. ໂຮງຮຽນມັດທະຍົມສົມບູນ
12. ສະໜາມກິລາບາງປະເພດ
13. ສວນສາທາລະນະຂອງບ້ານ
14. ມີພົນລະເມືອງແຕ່ 1,000 ຄົນຂຶ້ນໄປສຳລັບເຂດພູດອຍ, 3,000 ຄົນຂຶ້ນໄປສຳລັບເຂດທົ່ງພຽງ.



## VI. ໜ້າວຽກແລະຂັ້ນຕອນໃນຄູ່ມືການວາງຜັງບ້ານພັດທະນາ, ບ້ານໃຫ່ຍ ແລະ ຕົວເມືອງນ້ອຍໃນ ຊົນນະບົດ

### (5 ຂັ້ນຕອນ, 15 ໜ້າວຽກ)

ຂັ້ນຕອນທີ 1: ກຳນົດຂອບເຂດວາງແຜນ ແລະ ການສະເໜີໂຄງການ ມີ 4 ໜ້າວຽກ.

ຂັ້ນຕອນທີ 2: ການສຳຫຼວດ ແລະ ເກັບກຳຂໍ້ມູນ ມີ 2 ໜ້າວຽກ.

ຂັ້ນຕອນທີ 3: ສັງລວມ ແລະ ວິເຄາະຂໍ້ມູນ ມີ 4 ໜ້າວຽກ.

ຂັ້ນຕອນທີ 4: ການວາງແຜນຜັງ ມີ 2 ໜ້າວຽກ.

ຂັ້ນຕອນທີ 5: ການນຳສະເໜີປືກສາຫາລື ຂັ້ນບ້ານ ແລະ ກຸ່ມບ້ານ ຫຼື ບ້ານໃຫຍ່ ກັບພາກສ່ວນທີ່ກ່ຽວຂ້ອງເພື່ອປັບປຸງ ແລະ ຮັບຮອງ ມີ 3 ໜ້າວຽກ.

## ຂັ້ນຕອນທີ 1: ກຳນົດຂອບເຂດວາງແຜນ ແລະ ການສະເໜີໂຄງການ

### ວຽກທີ 1: ກະກຽມພື້ນແຜນຜັງ ຫຼື ແຜນທີ່ພາກຫ້ອງການ



ກະກຽມພື້ນແຜນທີ່ ໄດ້ຈາກກົມແຜນທີ່ແຫ່ງຊາດ



ກະກຽມພື້ນແຜນທີ່ ໄດ້ຈາກພາບຖ່າຍທາງອາກາດ




ກະກຽມພື້ນແຜນທີ່ໄດ້ ຈາກ GIS

9

### ວຽກທີ 2: ກະກຽມ ແລະ ສຶກສາຂໍ້ມູນເບື້ອງຕົ້ນພາກຫ້ອງການ

ຂໍ້ມູນທີ່ຈຳເປັນຕ້ອງໄດ້ສຶກສາເບື້ອງຕົ້ນ ກ່ອນການລົງເບິ່ງພື້ນທີ່ຕົວຈິງມີ

1. ສະພາບພື້ນທີ່ລວມ (ອີງຕາມແຜນທີ)
2. ແຜນພັດທະນາລວມຂອງເຂດກຸ່ມ ບ້ານ ຫຼື ຂອງເມືອງ ແລະ ແຂວງ
3. ສະພາບເສດຖະກິດ-ສັງຄົມ (ປະຊາກອນ) ແລະ ອື່ນໆ



10

## ວຽກທີ 3: ການເກັບກຳຂໍ້ມູນພາກສະໜາມ ແລະ ກຳນົດຂອບເຂດເພື່ອວາງແຜນຜັງ

ສຶກສາເບິ່ງສະພາບພື້ນທີ່ນັ້ນໆເສັຍກ່ອນ, ແລ້ວຈຶ່ງປຽບທຽບເບິ່ງຄືນ ຂໍ້ມູນທີ່ໄດ້ສຶກສາຢູ່ຫ້ອງການ ກັບສະພາບພື້ນທີ່ຕົວຈິງ, ປຶກສາຫາລືຮ່ວມກັນກັບພາກສ່ວນທີ່ກ່ຽວຂ້ອງໃນເວລາສຳຫຼວດເບິ່ງພື້ນທີ່ດັ່ງກ່າວ



ໃນເວລາສຳຫຼວດເບິ່ງພື້ນທີ່ ຕ້ອງກຳນົດຂອບເຂດວາງແຜນ ຜັງໃຫ້ຊັດເຈນ ໂດຍສະເພາະແມ່ນເນັ້ນໃສ່ໂຄງສ້າງເສັ້ນທາງ ແລະ ທີ່ຕັ້ງບັນດາອົງປະກອບຕ່າງໆ



## ວຽກທີ 4: ນຳສະເໜີຕໍ່ຜູ້ມີສິດຮັບຮອງ ເອົາຂອບເຂດວາງແຜນຜັງ

- ປຶກສາຫາລືຮ່ວມກັບອົງການປົກຄອງທ້ອງຖິ່ນ ຂັ້ນບ້ານ ຫຼື ຂັ້ນເມືອງ





- ສ້າງໄດ້ບົດບັນທຶກກອງປະຊຸມ ທີ່ມີຄວາມເປັນເອກະພາບໃນການກຳນົດຂອບເຂດວາງແຜນ ໂດຍມີບັນຊີລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມຕິດຄັດຂ້ອນທ້າຍພ້ອມດ້ວຍຮູບຖ່າຍ





- ສ້າງບົດໂຄງການ ແລະ ຮ່າງສັນຍາລະຫວ່າງ ເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາ.

12

# ຂັ້ນຕອນທີ 2: ການສຳຫຼວດ ແລະ ເກັບກຳຂໍ້ມູນ

## ວຽກທີ 5: ສຳຫຼວດ ສ້າງພື້ນແຜນທີ່

ການສ້າງພື້ນແຜນທີ່ສຳລັບການວາງແຜນຜັງບ້ານປະກອບມີ 2 ປະເພດຄື:



1. ສ້າງພື້ນແຜນທີ່ ດ້ວຍພາບຖ່າຍທາງອາກາດ



2. ສ້າງພື້ນແຜນທີ່ ດ້ວຍການຊ່ອງກ້ອງ

13

ພື້ນແຜນທີ່ ເຊິ່ງໄດ້ຈາກ ພາບຖ່າຍທາງອາກາດ ຫລື ຊ່ອງກ້ອງ ຕ້ອງທີ່ ກວມ ເອົາຂອບເຂດການ ວາງແຜນຜັງ, ຕາໜ່າງ ເສັ້ນທາງພົວພັນພາຍໃນ ແລະ ພາຍນອກ, ເຂດ ການນຳໃຊ້ທີ່ດິນແຕ່ລະ ປະເພດ, ສາຍນ້ຳ, ຫ້ວຍ ຮ່ອງ-ໜອງບຶງ ແລະ ເຂດສຳຄັນອື່ນໆ,



14

## ວຽກທີ 6: ເກັບກຳຂໍ້ມູນສະພາບທົ່ວໄປເພື່ອການວາງແຜນຜັງ

ເກັບກຳຂໍ້ມູນຢູ່ຫ້ອງການ ຂັ້ນເມືອງ ຫຼື ແຂວງ ກໍ່ຄືນຳຫ້ອງການຕ່າງໆທີ່ກ່ຽວຂ້ອງກັບການພັດທະນາ, ແລະ ເກັບກຳຂໍ້ມູນຢູ່ຂັ້ນ ບ້ານແຕ່ລະບ້ານ ໃນເຂດກຸ່ມບ້ານ

ແຫລ່ງຂໍ້ມູນທີ່ຕ້ອງເກັບກຳ

ສຳພາດບຸກຄົນ: ສຳພາດບຸກຄົນສຳຄັນຢູ່ຫ້ອງການລັດທີ່ກ່ຽວຂ້ອງ ແລະ ສຳພາດປະຊາຊົນທີ່ອາໃສຢູ່ແຕ່ລະບ້ານ (ບາງຄອບຄົວ)

**ສັງເກດການ ແລະ ຈົດບັນທຶກ**: ສັງເກດເບິ່ງສະພາບພື້ນທີ່ຕົວຈິງຂອງແຕ່ລະບ້ານ, ວິຖີການດຳລົງຊີວິດຂອງປະຊາຊົນ ແຕ່ລະບ້ານ, ສະພາບທຳມະຊາດ ແລະ ຜົນກະທົບຕ່າງໆ.

**ສຳລັບຂໍ້ມູນທີ່ຈຳເປັນຕ້ອງໄດ້ເກັບກຳປະກອບດ້ວຍ**

- ຂໍ້ມູນແຜນພັດທະນາຂອງບ້ານ
- ຂໍ້ມູນດ້ານປະຊາກອນ ຂອງແຕ່ລະບ້ານໃນເຂດວາງແຜນ
- ຂໍ້ມູນດ້ານສັງຄົມເຊັ່ນ ການປົກຄອງ, ສຶກສາ, ສາທາ....
- ຂໍ້ມູນດ້ານເສດຖະກິດເຊັ່ນ ຄ້າຂາຍ, ທ່ອງທ່ຽວ, ບໍລິການ...
- ຂໍ້ມູນດ້ານຄົມມະນາຄົມຂົນສົ່ງ
- ຂໍ້ມູນດ້ານສິ່ງແວດລ້ອມ

## ຂັ້ນຕອນທີ 3: ສັງລວມ ແລະ ວິເຄາະຂໍ້ມູນ

### ວຽກທີ 7: ສັງລວມຂໍ້ມູນລົງໃນແຜນຜັງປະຈຸບັນ

**ແຜນຜັງ ສະພາບປະຈຸບັນ**

- ແຜນຜັງທີ່ຕັ້ງການພົວພັນ ແລະ ຂອບເຂດວາງ
- ແຜນຜັງໂຄງສ້າງເສັ້ນທາງປະຈຸບັນ
- ແຜນຜັງນຳໃຊ້ທີ່ດິນປະຈຸບັນ
- ແຜນຜັງທີ່ຕັ້ງບັນດາກິດຈະການຕ່າງໆ
- ແຜນຜັງສະແດງຂອບເຂດບ້ານ ແລະ ຄວາມໜາແໜ້ນ

17

### ວຽກທີ 8: ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນແມ່ນອີງໃສ່ເອກະສານທີ່ເກັບກຳມາທັງ 3 ແບບ ທີ່ກຳນົດໄວ້ ໃນວຽກທີ 6 ດ້ານດີ ແລະ ດ້ານອ່ອນ:

- ໂຄງການ ທີ່ເປັນຜົນກະທົບຕໍ່ການພັດທະນາ
- ທ່າແຮງທາງດ້ານເສດຖະກິດ (ກະສິກຳ, ປູກຝັງ, ລ້ຽງສັດ, ການຄ້າ, ການທ່ອງທ່ຽວ ແລະ ການບໍລິການ)
- ທ່າອ່ຽງການຂະຫຍາຍຕົວຂອງສັງຄົມ
- ທ່າອ່ຽງການຂະຫຍາຍຕົວທາງດ້ານປະຊາກອນ.

18

## ວຽກທີ 9: ຮ່າງບົດລາຍງານຫຍໍ້

**ສ່ວນປະກອບຂອງບົດລາຍງານຫຍໍ້**

**ບົດລາຍງານຫຍໍ້**

ເພື່ອນຳສະເໜີຕໍ່ ກອງປະຊຸມປຶກສາຫາລືຮ່ວມກັບພາກສ່ວນອື່ນໆທີ່ກ່ຽວຂ້ອງ ທີ່ເຂົ້າຮ່ວມກອງປະຊຸມລວມທັງປະທານ ທີ່ຈະຮັບຮອງເອົາການວາງແຜນຜັງ ໄດ້ມີຄວາມເຂົ້າໃຈເຖິງຄວາມເປັນມາ, ຂັ້ນຕອນໃນ ການວາງແຜນ ຜັງ ແລະ ເຫດຜົນຕ່າງໆ.




19

## ວຽກທີ 10: ຮ່າງແຜນຜັງທາງເລືອກການພັດທະນາ

ແຜນຜັງທາງເລືອກການພັດທະນາແມ່ນນຳໃຊ້ແຜນຜັງສະພາບປະຈຸບັນເປັນພື້ນ ແລ້ວຈຶ່ງກຳນົດສັນຍາລັກການພັດທະນາດ້ານຕ່າງໆ ລົງເຊັ່ນ:

- ດ້ານການປົກຄອງ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ
- ດ້ານທີ່ຢູ່ອາໃສ
- ດ້ານກະສິກຳ (ປູກຝັງ-ລ້ຽງສັດ)
- ດ້ານການຄ້າ-ການບໍລິການ
- ດ້ານອຸດສາຫະກຳ
- ດ້ານການປົກປັກຮັກສາທຳມະຊາດ, ວັດທະນະທຳ ແລະ ສິ່ງແວດລ້ອມ
- ດ້ານອື່ນໆ...

20

## ຂັ້ນຕອນທີ 4: ການວາງແຜນຜັງ:

ໃນການວາງແຜນຜັງແມ່ນອີງໃສ່

- ສະພາບຄວາມເປັນຈິງຂອງພື້ນທີ່
- ຄວາມຕ້ອງການ ແລະ ນະໂຍບາຍຂອງຂອງອົງການປົກຄອງທ້ອງຖິ່ນ.

ການວາງແຜນແມ່ນເລັ່ງໃສ່:

- ໂຄງລ່າງ
- ການນຳໃຊ້ທີ່ດິນ

21

## ວຽກທີ 11: ການສ້າງແຜນຜັງຄົບຊຸດ

ແຜນຜັງປະກອບມີ 2 ພາກຄື:

1. **ພາກຜັງວິເຄາະສະພາບປະຈຸບັນ (ທີ່ໄດ້ສະເໜີໃນວຽກ 7)**
2. **ພາກວາງແຜນ**

- ແຜນຜັງທາງເລືອກໃນການພັດທະນາ
- ແຜນຜັງໂຄງສ້າງຕາໜ່າງເສັ້ນທາງ
- ແຜນຜັງການກຳນົດເຂດນຳໃຊ້ທີ່ດິນ
- ແຜນຜັງຈັດສັນລະອຽດ (ສຳນັກງານອົງການ, ການສຶກສາ, ສາທາລະນະ, ເຂດການບໍລິເສດຖະກິດ, ສວນສາທາລະນະ ແລະ ອື່ນໆ)
- ແຜນຜັງກຳນົດໂຄງການຫຼັກໃນການພັດທະນາ
- ແຜນຜັງເຕັກນິກ (ລະບາຍນ້ຳ, ລະບົບນ້ຳໃຊ້, ລະບົບໄຟຟ້າ, ຂີ້ເຫຍື້ອ...)
- ແຜນຜັງອະນຸລັກ (ຖ້າມີ)

22

## ແຜນຜັງໂຄງສ້າງຕາໜ່າງເສັ້ນທາງ

ເສັ້ນທາງໄດ້ຈັດເປັນ 4 ປະເພດດັ່ງນີ້:

1. ເສັ້ນທາງຫຼວງແຫ່ງຊາດກວ້າງເບື້ອງລະ 25 ແມັດ ນັບຈາກໃຈກາງທາງອອກໄປ (ລວມທັງ ເຂດສະຫງວນຂອງທາງ)
2. ເສັ້ນທາງຫຼວງແຂວງ ກວ້າງເບື້ອງລະ 15 ແມັດ ນັບຈາກໃຈກາງທາງອອກໄປ
3. ເສັ້ນທາງຫຼວງເມືອງ ກວ້າງເບື້ອງລະ 10 ແມັດ ນັບຈາກໃຈກາງທາງອອກໄປ
4. ເສັ້ນທາງຫຼວງຊົນນະບົດ ກວ້າງເບື້ອງລະ 5 ແມັດ ນັບຈາກໃຈກາງທາງອອກໄປ



ໜ້າຕັດທາງຫລວງແຫ່ງຊາດ ຜ່ານໃນເມືອງ






ເສັ້ນທາງຫລວງ ແຂວງ




ເສັ້ນທາງຫລວງເມືອງ






ເສັ້ນທາງສາຍແຈກພາຍໃນບ້ານ

## ແຜນຜັງ ການກຳນົດເຂດນຳໃຊ້ທີ່ດິນ

| ລ/ດ | ເຂດການນຳໃຊ້ທີ່ດິນ | ສັນຍາລັກ | ສີ | | ເຄື່ອງໝາຍ |
|---|---|---|---|---|---|
| 1 | ເຂດໃຈກາງຕົວເມືອງ | UA | | ແດງ | |
| 2 | ເຂດຂະຫຍາຍຕົວເມືອງ | UD | | ເຫລືອງ | |
| 3 | ເຂດອຸດສາຫະກຳ | I | | ຂີ້ເທົ່າ | |
| 4 | ເຂດກະສິກຳ | NA | | ຂຽວອ່ອນ | |
| 5 | ເຂດປ່າໄມ້ ແລະ ທຳມະຊາດ | NE | | ຂຽວແກ່ | |

## ຕາຕະລາງ ຄ່າຂອງການນຳໃຊ້ທີ່ດິນ

| ລ/ດ | ເຂດການນຳໃຊ້ທີ່ດິນ | ອັດຕາສ່ວນການນຳໃຊ້ທີ່ດິນ (E)% | ສຳປະສິດການນຳໃຊ້ທີ່ດິນ (COS) | ຄວາມສູງຂອງອາຄານສູງສຸດ (H) ແມັດ |
|---|---|---|---|---|
| 1 | ເຂດໃຈກາງຕົວເມືອງ | 60 | 1.8 | 18 |
| 2 | ເຂດຂະຫຍາຍຕົວເມືອງ | 50 | 1.5 | 15 |

### ແຜນຜັງຈັດສັນລະອຽດ

ການຈັດສັນລະອຽດເພື່ອກຳນົດຂອບເຂດທີ່ດິນ ແລະ ຈຸດທີ່ຕັ້ງຂອງບັນດາກິດຈະການບໍລິການສາທາລະນະຕ່າງໆ ທີເປັນອົງປະກອບຂອງຕົວເມືອງນ້ອຍເຊັ່ນ:

- ຫ້ອງການປົກຄອງ
- ສະໂມສອນ ຫຼື ວັດທະນະທຳຂອງບ້ານ
- ສຸກສາລາ ຫຼື ໂຮງໝໍນ້ອຍ
- ຫ້ອງໜ່ວຍຫລື ສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້
- ສູນບລິການໄປສະນີ ຫລື ໂທລະຄົມມະນາຄົມ
- ໜ່ວຍບໍລິການທະນາຄານ ຫລື ໜ່ວຍບໍລິການການເງິນຈຸລະພາກ
- ຫ້ອງສະໝຸດ ແລະ ຫ້ອງອ່ານໜັງສື
- ໂຮງຮຽນອະນຸບານ
- ໂຮງຮຽນປະຖົມສົມບູນ
- ໂຮງຮຽນມັດທະຍົມສົມບູນ
- ຕະຫລາດ
- ສະໜາມກິລາບາງປະເພດ
- ສວນສາທາລະນະຂອງບ້ານ
- ທີ່ພັກອາໄສຂອງປະຊາຊົນ
- ເຂດຂຽວຕ່າງໆ.

## ວຽກທີ12: ຂຽນບົດລາຍງານລວມ ແລະ ບົດແນະນຳ

- ພາກທີ 1: ພາກສະເໜີ
- ພາກທີ 2: ສະພາບປັດຈຸບັນ
- ພາກທີ 3: ການວິເຄາະຂໍ້ມູນ
- ພາກທີ 4: ທິດທາງການວາງແຜນຜັງໃນອະນາຄົດ
- ພາກທີ 5: ກົດລະບຽບການນຳໃຊ້ທີ່ດິນ
- ພາກທີ 6: ບົດແນະນຳການຈັດຕັ້ງປະຕິບັດ
- ເອກະສານຊ້ອນທ້າຍ

29

## <u>ຂັ້ນຕອນທີ 5:</u> ການນຳສະເໜີປຶກສາຫາລືຂັ້ນບ້ານ ແລະ ກຸ່ມບ້ານ ຫຼື ບ້ານໃຫຍກັບ ພາກສ່ວນທີ່ກ່ຽວຂ້ອງເພື່ອປັບປຸງ ແລະ ຮັບຮອງ

**ການນຳສະເໜີ ມີ 3 ຂັ້ນຕອນຄື:**

- <u>ວຽກທີ 13:</u> ສະເໜີຕໍ່ກອງປະຊຸມປຶກສາຫາລື ຂັ້ນບ້ານ ແລະ ກຸ່ມບ້ານ.
- <u>ວຽກທີ 14:</u> ການສະເໜີຕໍ່ກອງປະຊຸມປຶກສາຫາລື ຂັ້ນວິຊາການເມືອງ.
- <u>ວຽກທີ 15:</u> ສະເໜີຕໍ່ກອງປະຊຸມປຶກສາຫາລື ເຈົ້າເມືອງ ເພື່ອຮັບຮອງ.

**ກອງປະຊຸມທຸກຄັ້ງຕ້ອງມີບົດບັນທຶກກອງປະຊຸມ, ລາຍຊື່ເຂົ້າຮ່ວມ ແລະ ຮູບຖ່າຍ**

30

## VI. ບາງຕົວຢ່າງປະເມີນລາຄາ ເບື້ອງຕົ້ນ

4.2 ຕາຕະລາງສັງລວມ ລາຄາຫົວໜ່ວຍການກໍ່ສ້າງ ບັນດາພື້ນຖານໂຄງລ່າງ ແລະ ບັນດາກິດຈະການບໍລິພັນທີ່ຈໍາເປັນສໍາລັບ ຕົວເມືອງນ້ອຍໃນຊົນນະບົດ.

| ລ/ດ | ລາຍການ | ຫົວໜ່ວຍ | ລາຄາຫົວໜ່ວຍ (ກີບ) | ໝາຍເຫດ |
|---|---|---|---|---|
| I | **ວາງແຜນຜັງຊີ້ນໍາລວມບ້ານ:** | | | |
| 1 | ສ້າງພື້ນແຜນທີ່: | ຮຕ | | |
| - | ພາບຖ່າຍ ທາງດາວທຽມ | ຮຕ | 320,000 | ຢ່າງໜ້ອຍ 100 ກມ$^2$ |
| - | ພາບຖ່າຍ ທາງດາວທຽມມີເສັ້ນລະດັບ | ຮຕ | 1,000,000 | ຢ່າງໜ້ອຍ 100 ກມ$^2$ |
| - | ສໍາຫຼວດສ່ອງກ້ອງ | ຮຕ | 800,000 | |
| 2 | ອອກແບບວາງແຜນຜັງລວມ | ຮຕ | 150,000 | |
| II | **ການຈັດສັນທີ່ຢູ່ອາໄສ:** | | | |
| 1 | ບຸກເບີກພື້ນທີ່ຢູ່ອາໄສ | ມ$^2$ | 2,891 | |
| 2 | ກໍ່ສ້າງບ້ານພັກປະຊາຊົນ | ມ$^2$ | 4,174,239 | |
| III | **ກໍ່ສ້າງລະບົບພື້ນຖານໂຄງລ່າງຄົມມະນາຄົມ:** | | | |
| 1 | ເສັ້ນທາງຈາກບ້ານ ເສັ້ນທາງຕົ້ນຕໍ (ທາງຂັ້ນ VI) | ກມ | 96,000,000 | |
| 2 | ເສັ້ນທາງຈາກບ້ານ ບ້ານໃກ້ຄຽງ (ທາງຂັ້ນ VII) | ກມ | 80,000,000 | |
| 3 | ເສັ້ນທາງ ພາຍໃນບ້ານ (ທາງຂັ້ນ VIII) | ກມ | 56,000,000 | |
| IV | **ລະບົບ ໄຟຟ້າ:** | | | |
| 1 | ກໍ່ສ້າງ ແລະ ຕິດຕັ້ງຕາຂ່າຍໄຟຟ້າ 22 kv | | | |
| - | ຂະໜາດສາຍ 25, 35, 50 mm$^2$ | ກມ | 97,529,517 | |
| - | ຂະໜາດສາຍ 70 mm$^2$ | ກມ | 104,903,037 | |
| - | ຂະໜາດສາຍ 95 mm$^2$ | ກມ | 150,114,287 | |
| - | ຂະໜາດສາຍ 120 mm$^2$ | ກມ | 158,753,687 | |
| - | ຂະໜາດສາຍ 150 mm$^2$ | ກມ | 177,441,587 | |
| - | ຂະໜາດສາຍ 185 mm$^2$ | ກມ | 193,461,784 | |
| | ຂະໜາດສາຍ 240 mm$^2$ | ກມ | 222,567,784 | |
| 2 | ກໍ່ສ້າງ ແລະ ຕິດຕັ້ງຕາຂ່າຍໄຟຟ້າ 0,4kv | | | |
| - | ຂະໜາດສາຍຫຸ້ມ 16 mm$^2$ | ກມ | 69.151.005 | |
| - | ຂະໜາດສາຍຫຸ້ມ 25 mm$^2$ | ກມ | 76.323.555 | |
| - | ຂະໜາດສາຍຫຸ້ມ 35 mm$^2$ | ກມ | 84.930.615 | |
| - | ຂະໜາດສາຍຫຸ້ມ 50 mm$^2$ | ກມ | 102.144.735 | |
| - | ຂະໜາດສາຍຫຸ້ມ 70 mm$^2$ | ກມ | 113.620.815 | |
| - | ຂະໜາດສາຍຫຸ້ມ 95 mm$^2$ | ກມ | 135.138.465 | |
| 3 | ກໍ່ສ້າງ ແລະ ຕິດຕັ້ງ ໝໍ້ແປງໄຟ (KVA) | ໜ່ວຍ | | |
| - | ຂະໜາດໝໍ້ແປງ 30 Mono | ໜ່ວຍ | 47,141,706 | |
| - | ຂະໜາດໝໍ້ແປງ 50 Mono | ໜ່ວຍ | 52,502,145 | |
| - | ຂະໜາດໝໍ້ແປງ 30 | ໜ່ວຍ | 51,683,103 | |
| - | ຂະໜາດໝໍ້ແປງ 50 | ໜ່ວຍ | 63,047,443 | |
| - | ຂະໜາດໝໍ້ແປງ 100 | ໜ່ວຍ | 74,501,196 | |
| - | ຂະໜາດໝໍ້ແປງ 160 | ໜ່ວຍ | 97,823,996 | |
| - | ຂະໜາດໝໍ້ແປງ 200 | ໜ່ວຍ | 106,231,241 | |
| - | ຂະໜາດໝໍ້ແປງ 250 | ໜ່ວຍ | 121,309,800 | |
| - | ຂະໜາດໝໍ້ແປງ 315 | ໜ່ວຍ | 126,894,191 | |
| - | ຂະໜາດໝໍ້ແປງ 400 | ໜ່ວຍ | 141,689,741 | |
| - | ຂະໜາດໝໍ້ແປງ 500 | ໜ່ວຍ | 168,148,481 | |
| V | **ລະບົບ ນໍ້າໃຊ້:** | | | |
| 1 | ຊຸດນໍ້າສ້າງໃສ່ທໍ່ເບຕົງ | ມ.ຍ | | |
| 2 | ເຈາະບາດານ | ໜ່ວຍ | | |
| 3 | ລະບົບນໍ້າລິນ | ແຫ່ງ | | |
| 4 | ນໍ້າປະປາຂະໜາດນ້ອຍ | ແຫ່ງ | | |
| VI | **ກໍ່ສ້າງກິດຈະການ ບໍລິພັນທີ່ຈໍາເປັນ:** | | | |
| 1 | **ກິດຈະການ ການສຶກສາ:** | | | |
| - | ໂຮງຮຽນ ອະນຸບານ | ມ$^2$ | 3,056,797 | |
| - | ໂຮງຮຽນ ປະຖົມ | ມ$^2$ | 3,056,797 | |
| - | ໂຮງຮຽນ ມັດທະຍົມ | ມ$^2$ | 3,325,526 | |
| - | ໂຮງຮຽນ ວິຊາຊີບ, ສູນຝຶກວິຊາຊີບ | ມ$^2$ | 3,639,741 | |
| - | ຫໍພັກພະນັກງານ | ມ$^2$ | 3,847,555 | |
| 2 | **ພື້ນຖານສາທາລະນະສຸກ:** | | | |
| - | ສຸກສາລາ ຫຼື ໂຮງໝໍນ້ອຍ | ມ$^2$ | 3,047,233 | |
| - | ເຮືອນພັກພະນັກງານ ແພດ-ໝໍ | ມ$^2$ | 3,847,555 | |
| 3 | **ກິດຈະການ ສໍານັກງານອົງການ:** | | | |
| - | ຫ້ອງການບ້ານ | ມ$^2$ | 2,997,778 | |
| - | ເຮືອນພັກພະນັກງານ | ມ$^2$ | 3,847,555 | |
| - | ສະໂມສອນ, ຫໍວັດທະນະທໍາ | ມ$^2$ | 4,513,392 | |
| - | ຫ້ອງການໄປສະນີ, ໂທລະຄົມມະນາຄົມ | ມ$^2$ | 2,997,778 | |
| 4 | **ກິດຈະການ ການຄ້າ-ການບໍລິການ:** | | | |
| - | ຕະຫຼາດຊຸມຊົນ | ມ$^2$ | 1,177,292 | |
| - | ຄິວລົດ | ມ$^2$ | 596,586 | |
| - | ທະນາຄານ | ມ$^2$ | 2,997,778 | |
| - | ສູນບໍລິການໄປສະນີ-ໂທລະຄົມ | ມ$^2$ | 2,997,778 | |

# ຂໍຂອບໃຈ!